# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee

**I.** ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ..................................01 - 05

**II.** ການເຄື່ອນໄຫວຂອງການນຳການຂັ້ນສູງຂອງພັກ ປະຊາຊົນ ປະຕິວັດລາວ................................06 - 07

**III.** ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ...............................................07 - 11

ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ເດືອນ ກັນຍາ 2025

ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

Tel: 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la

## I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

### 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

#### 1) ພັກກອມມູນິດຫວຽດນາມ

ວັນທີ 02 ກັນຍາ 2025, ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ, ຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ ແລະ ນະຄອນຫຼວງຮ່າໂນ້ຍ ໄດ້ຈັດພິທີສະເຫຼີມສະຫຼອງ ການປະຕິວັດເດືອນສິງຫາ (19/8/1945-19/8/2025) ແລະ ວັນຊາດ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ (2/9/1945-2/9/2025) ຄົບຮອບ 80 ປີ ທີ່ ສະໜາມຫຼວງບາດິ່ງ. ມີບັນດາສະຫາຍການນຳຂັ້ນສູງພັກ-ລັດ ຂອງ ຫວຽດນາມ ນຳໂດຍ ສະຫາຍ ໂຕ ເລິມ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ; ສະຫາຍ ນົ່ງ ດຶກ ແມັງ, ອະດີດເລຂາທິການໃຫຍ່; ສະຫາຍ ເລືອງ ເກືອງ, ປະທານປະເທດແຫ່ງ ສສ ຫວຽດນາມ; ມີບັນດາສະຫາຍ ນັກປະຕິວັດຜູ້ອາວຸໂສ, ມີບັນດາຄະນະຜູ້ແທນຂັ້ນສູງຂອງ ລາວ, ກຳປູເຈຍ, ສ.ກູບາ, ຈີນ, ເບລາຣຸດຊີ, ຣັດເຊຍ ແລະ ເພື່ອນມິດຕ່າງປະເທດຈຳນວນຫຼາຍເຂົ້າຮ່ວມ. ສະຫາຍ ໂຕ ເລິມ ໄດ້ກ່າວປາໄສວ່າ: ພວກເຮົາໄດ້ລະນຶກເຖິງບັນພະບູລຸດ, ສະແດງຄວາມຮູ້ບຸນຄຸນຢ່າງສຸດຊຶ້ງເຖິງປະທານ ໂຮ່ຈິມິນ ຜູ້ຍິ່ງໃຫຍ່, ບັນດານັກປະຕິວັດຮຸ່ນກ່ອນ, ພີ່ນ້ອງຮ່ວມຊາດ, ນັກຮົບທີ່ໄດ້ເສຍສະຫຼະ, ອຸທິດຕົນໃຫ້ແກ່ຄວາມເປັນເອກະລາດ, ເສລີພາບ, ທ້ອນໂຮມປະເທດຊາດ ແລະ ຄວາມຜາສຸກຂອງປະຊາຊົນຫວຽດນາມ. ກ່ອນໜ້ານີ້ 80 ປີທີ່ເຕັມໄປດ້ວຍຄວາມທຸກຍາກລຳບາກແຕ່ສະຫງ່າອົງອາດ, ພວກເຮົາໄດ້ຢັ້ງຢືນສັດຈະທຳວ່າ: ພາຍໃຕ້ຄົບທຸງທີ່ມີກຽດສະຫງ່າຂອງພັກ, ກັບແສງສະຫວ່າງຂອງປະທານ ໂຮ່ຈິມິນ ທີ່ຊີ້ນຳທາງ; ອີງໃສ່ກຳລັງແຮງຂອງປະຊາຊົນ ແລະ ກ້ອນກຳລັງມະຫາສາມັກຄີຂອງຊົນຊາດ. ພວກເຮົາຈະສາມາດຜ່ານຜ່າທຸກຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍໄດ້; ບໍ່ມີເປົ້າໝາຍຈັບງາມລ້ຳເລີດໃດທີ່ຊົນຊາດເຮົາຜ່ານບໍ່ໄດ້; ພວກເຮົາຈະພ້ອມກັນສ້າງປະເທດຫວຽດນາມ ໃຫ້ເປັນປະເທດທີ່ເຂັ້ມແຂງ, ຈະເລີນຮັ່ງມີ, ຜາສຸກນັ້ນ ໃນໂອກາດຄົບຮອບ 100 ປີ ຂອງການສ້າງຕັ້ງປະເທດຫວຽດນາມໃນປີ 2045 ຕາມເປົ້າໝາຍທີ່ວາງໄວ້.

#### 2) ພັກກອມມູນິດຈີນ

ວັນທີ 03 ກັນຍາ 2025, ພິທີລະນຶກໄຊຊະນະສົງຄາມປະຊາຊົນຈີນຕໍ່ຕ້ານການຮຸກຮານຂອງຟາຊິດ ແລະ ສົງຄາມຕໍ່ຕ້ານຟາຊິດໂລກ ຄົບຮອບ 80 ປີ ພາຍໃຕ້ຫົວຂໍ້: “ຈົດຈຳປະຫວັດສາດ, ຈາລຶກຄຸນງາມຄວາມດີຂອງວິລະຊົນຜູ້ເສຍສະຫຼະຊີວິດ, ຖະໜອມຮັກສັນຕິພາບ ແລະ ສ້າງອະນາຄົດ” ໄດ້ຈັດຂຶ້ນຢ່າງຍິ່ງໃຫຍ່ ຢູ່ສະໜາມຫຼວງທຽນອ່ານເມີນ, ນະຄອນຫຼວງປັກກິ່ງ, ສປ ຈີນ ໂດຍມີຂັ້ນປະມຸກລັດ  ແລະ ຕາງໜ້າລັດຖະບານ ຈາກຕ່າງປະເທດເຂົ້າຮ່ວມ 26 ປະເທດ ໃນນັ້ນມີ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ປະທານປະເທດ ແຫ່ງ ສປປ ລາວ; ສະຫາຍ ເລືອງ ເກືອງ, ປະທານປະເທດແຫ່ງ ສສ ຫວຽດນາມ; ສະຫາຍ ຄິມ ເຈິງອຸນ, ຜູ້ນຳສູງສຸດ ສປປ ເກົາຫຼີ; ທ່ານ ວະລາດິເມຍ ປູຕິນ, ປະທານາທິບໍດີຣັດເຊຍ; ທ່ານ ອັນໂຕນີໂອ ກູເຕີເຣສ໌ (António Guterres), ເລຂາທິການໃຫຍ່ອົງການສະຫະປະຊາຊາດ. ໃນພິທີດັ່ງກ່າວ ໄດ້ມີການສວນສະໜາມຢ່າງຍິ່ງໃຫຍ່. ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດ, ປະທານຄະນະກຳມະການການທະຫານສູນກາງຈີນ ກ່າວຄຳປາໄສ ວ່າ ກ່ອນໜ້ານີ້ 80 ປີ, ປະຊາຊາດຈີນໄດ້ຜ່ານການຕໍ່ສູ້ຢ່າງນອງເລືອດທີ່ຫຍຸ້ງຍາກລຳບາກ ແລະ ຍືດເຍື້ອຍາວນານເປັນເວລາ 14 ປີ ຈີນສາມາດຍາດໄດ້ໄຊຊະນະອັນຍິ່ງໃຫຍ່ຂອງສົງຄາມຕໍ່ຕ້ານການຮຸກຮານຂອງຟາຊິດ ແລະ ປະ ກາດໄຊຊະນະຢ່າງສົມບູນໃນສົງຄາມຕໍ່ຕ້ານຟາຊິດໂລກ.

ວັນທີ 08 ກັນຍາ 2025, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດ ແຫ່ງ ສປ ຈີນ ໄດ້ເຂົ້າຮ່ວມກອງປະຊຸມອອນລາຍບຣິກ (Virtual BRICS Summit) ແລະ ໄດ້ກ່າວຄຳປາໄສທີ່ມີຫົວຂໍ້ວ່າ:“ສາມັກຄີ ແລະ ຮ່ວມມືກັນເພື່ອພ້ອມກັນກ້າວໜ້າ”. ສະຫາຍ ສີ ຈິ້ນຜິງ ໄດ້ສະເໜີ 3 ຂໍ້ຄື: 1) ຍຶດໝັ້ນລັດທິຫຼາຍຝ່າຍ, ປົກປ້ອງຄວາມສະເໝີພາບກັນ ແລະ ຄວາມເປັນທຳສາກົນ; 2) ຍຶດໝັ້ນການເປີດປະຕູສູ່ພາຍນອກ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ປົກປັກຮັກສາລະບຽບເສດຖະກິດການຄ້າສາກົນ; 3) ຍຶດໝັ້ນຄວາມສາມັກຄີ ແລະ ການຮ່ວມມື, ເຕົ້າໂຮມກຳລັງ ເພື່ອການພັດທະນາຮ່ວມ. ບັນດາຜູ້ນຳປະເທດຕ່າງໆທີ່ໄດ້ເຂົ້າຮ່ວມກອງປະຊຸມໄດ້ກ່າວວ່າ: ປະເທດສະມາຊິກບຣິກສ ຕ້ອງເພີ່ມທະວີຄວາມສາມັກຄີ ແລະ ການປະສານງານກັນ, ຮ່ວມກັນຮັບມືກັບວິກິດການ ແລະ

ສິ່ງທ້າທາຍ, ຮ່ວມກັນປົກປັກຮັກສາລັດທິຫຼາຍຝ່າຍ, ປົກປັກຮັກສາໂຄງປະກອບການຄ້າສາກົນທີ່ເສລີ ແລະ ເປີດປະຕູ, ປົກປັກຮັກສາຜົນປະໂຫຍດຮ່ວມຂອງປະເທດໃນເຂດໂລກໃຕ້.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

**ກອງປະຊຸມສຸດຍອດອົງການຮ່ວມມືຊຽງໄຮ (SCO):** ກອງປະຊຸມສຸດຍອດອົງການຮ່ວມມືຊຽງໄຮ ຈັດຂຶ້ນໃນລະຫວ່າງວັນທີ 31 ສິງຫາ-01 ກັນຍາ 2025 ທີ່ ນະຄອນທຽນສິນ, ສປ ຈີນ ໂດຍມີຜູ້ນໍາລະດັບໂລກ ແລະ ຜູ້ແທນລັດຖະບານ 20 ກວ່າປະເທດເຂົ້າຮ່ວມ ໃນນັ້ນມີ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ປະທານປະເທດ ແຫ່ງ ສປປ ລາວ; ສະຫາຍ ເລືອງ ເກື່ອງ, ປະທານປະເທດແຫ່ງ ສສ ຫວຽດນາມ; ສະຫາຍ ຄິມ ເຈິງອຸນ, ຜູ້ນໍາສູງສຸດ ສປປ ເກົາຫຼີ; ທ່ານ ວະລາດິເມຍ ປູຕິນ, ປະທານາທິບໍດີຣັດເຊຍ; ທ່ານ ອັນໂຕນິໂອ ກູເຕເຣສ໌ (António Guterres), ເລຂາທິ ການໃຫຍ່ອົງການສະຫະປະຊາຊາດ. ສະຫາຍ ສີ ຈິ້ນຜິງ, ປະທານປະເທດ ແຫ່ງ ສປ ຈີນ ໄດ້ກ່າວເປີດກອງປະຊຸມ ໂດຍໄດ້ຮຽກຮ້ອງໃຫ້ປະເທດສະມາຊິກ ຮ່ວມປັບປຸງຍຸດໂທບາຍການພັດທະນາຂອງຕົນເອງໃຫ້ດີຍິ່ງຂຶ້ນ ເພື່ອໃຫ້ສາມາດວາງແຜນ ແລະ ດໍາເນີນໂຄງການຕ່າງໆຮ່ວມກັນໄດ້ ແລະ ທົ່ວໂລກຈະໄດ້ຮັບຜົນປະໂຫຍດ. ນອກນັ້ນ, ປະເທດສະມາຊິກ ຄວນສະໜັບສະໜູນໂລກທີ່ມີຫຼາຍຂົ້ວອໍານາດ ແລະ ເປັນລະບົບ ຊຶ່ງຈະເຮັດໃຫ້ການຄຸ້ມຄອງບໍລິຫານໂລກມີຄວາມຍຸຕິທໍາ ແລະ ເທົ່າທຽມກັນຫຼາຍຂຶ້ນ ລວມເຖິງການຕໍ່ຕ້ານແນວຄິດແບບສົງຄາມເຢັນ, ການປະເຊີນໜ້າກັນແບບກຸ່ມ ແລະ ການຂູ່ເຂັນ. ພ້ອມກັນນັ້ນ, ກໍຮຽກຮ້ອງໃຫ້ ປະເທດສະມາຊິກ ສົ່ງເສີມໂຄງການ ໜຶ່ງແລວໜຶ່ງເສັ້ນທາງ ຊຶ່ງເປັນໂຄງການພື້ນຖານໂຄ່ງລາງ ແລະ ການເຊື່ອມຕໍ່ລະດັບໂລກທີ່ສໍາຄັນ. ນອກຈາກນັ້ນ, ສປ ຈີນ ໄດ້ວາງ 05 ບຸລິມະສິດ ພາຍໃຕ້ຂໍ້ລິເລີ່ມເລີ່ມໃໝ່ ຄື: ຢຶດໝັ້ນຄວາມສະເໝີພາບດ້ານອະທິປະໄຕ, ເຄົາລົບກົດໝາຍສາກົນ, ປະຕິບັດລັດທິຫຼາຍຝ່າຍ, ໃຫ້ຄວາມສໍາຄັນກັບປະຊາຊົນເປັນອັນດັບໜຶ່ງ ແລະ ເນັ້ນໃສ່ໝາກຜົນຂອງການປະຕິບັດ. ໃນກອງປະຊຸມ ຍັງໄດ້ຂະຫຍາຍການຮ່ວມມືດ້ານຄວາມໝັ້ນຄົງຂອງພາກພື້ນ ໄປສູ່ການຮ່ວມມືດ້ານເສດຖະກິດ ແລະ ວັດທະນະທໍາ. ສ່ວນທ່ານ ປູຕິນ ໄດ້ກ່າວໃນກອງປະຊຸມ SCO ວ່າ ອາດກາຍເປັນກົນໄກສໍາຄັນໃນການນໍາໄປສູ່ລະບົບການຄຸ້ມຄອງ ບໍລິຫານໂລກທີ່ຄວາມຍຸຕິທໍາກວ່າເກົ່າ ແລະ ຈະສະໜັບສະໜູນຂໍ້ລິເລີ່ມຂອງຈີນ. ປັດຈຸບັນ, ອົງການຮ່ວມມືຊຽງໄຮ້ ໄດ້ກາຍເປັນອົງການລະດັບພາກພື້ນໃຫຍ່ທີ່ສຸດໃນໂລກທີ່ມີ 26 ປະເທດເຂົ້າຮ່ວມ (ສະມາຊິກ 06 ປະເທດ; ປະເທດສັງເກດການ 05 ປະເທດ; ຄູ່ຮ່ວມເຈລະຈາ 15 ປະເທດ ໃນນັ້ນລວມມີ ລາວ), ໄດ້ດໍາເນີນການຮ່ວມມືໃນ 50 ກວ່າຂົງເຂດ ແລະ ມີຍອດມູນຄ່າເສດຖະກິດບັນລຸເກືອບ 30.000 ຕື້ໂດລາ ນັບແຕ່ສ້າງຕັ້ງກຸ່ມ SCO ເປັນຕົ້ນມາ.

**ການເມືອງຍີ່ປຸ່ນ:** ວັນທີ 07 ກັນຍາ 2025, ທ່ານ ຊິເກຣຸ ອິຊິບະ (Shigeru Ishiba), ນາຍົກລັດຖະມົນຕີຍີ່ປຸ່ນ ໄດ້ປະກາດລາອອກຈາກຕໍາແໜ່ງຜູ້ນໍາລັດຖະບານ ແລະ ຫົວໜ້າພັກເສລີປະຊາທິປະໄຕ (LDP) ເພື່ອສະແດງຄວາມຮັບຜິດຊອບໃນການທີ່ ພັກຂອງຕົນປະລາໄຊໃນການເລືອກຕັ້ງສໍາຄັນສອງຄັ້ງຕິດຕໍ່ກັນ, ຜ່ານມາພັກເສລີປະຊາທິປະໄຕ ແລະ ພັກໂຄເມໂຕະ ສູນເສຍສຽງສ່ວນຫຼາຍ ທັງໃນສະພາຕໍ່າ ແລະ ສະພາສູງ ເນື່ອງຈາກປະຊາຊົນ ເກີດຄວາມບໍ່ພໍໃຈ ລັດຖະບານ ທີ່ບໍ່ສາມາດແກ້ໄຂບັນຫາທີ່ເກີດຂຶ້ນ ໂດຍສະເພາະ ບັນຫາທາງດ້ານເສດຖະກິດ. ປັດຈຸບັນ ຍີ່ປຸ່ນ ກໍາລັງປະເຊີນກັບບັນຫາລາຄາສິນຄ້າ, ອາຫານທີ່ເພີ່ມຂຶ້ນສູງ ແລະ ຜົນກະທົບຈາກມາດຕະການຂຶ້ນພາສີຂອງ ສ.ອາເມຣິກາ ຕໍ່ອຸດສາຫະກໍາລົດໃຫຍ່ ທີ່ມີຄວາມສໍາຄັນຕໍ່ເສດຖະກິດຍີ່ປຸ່ນ. ໃນວັນທີ 09 ກັນຍາ 2025, ພາຍຫຼັງການລາອອກຂອງທ່ານ ອິຊິບະ, ພາຍໃນພັກ LDP ໄດ້ເລີ່ມຂະບວນການຄັດເລືອກຫົວໜ້າພັກ ກໍຄືຕໍາແໜ່ງນາຍົກລັດຖະມົນຕີຄົນໃໝ່ ໃນນັ້ນມີ ທ່ານ ໂທຊິມິສຶ ໂມເຕກິ (Toshimitsu Motegi), ອະດີດລັດຖະມົນຕີກະຊວງການຕ່າງປະເທດ; ທ່ານ ໂຍຊິມາສະ ຮາຍາຊິ (Yoshimasa Hayashi), ຫົວໜ້າເລຂາທິການຄະນະລັດຖະມົນຕີ; ທ່ານ ຊານາເອະ ທາຄາອິຈິ (Sanae Takaichai), ອະດີດລັດຖະມົນຕີກະຊວງຄວາມໝັ້ນຄົງດ້ານເສດຖະກິດ ແລະ ທ່ານ ຊິນຈິໂຣ ໂຄອິຊູມິ (Shinjiro Koizumi), ລັດຖະມົນຕີກະຊວງກະສິກໍາ, ຊຶ່ງການລົງຄະແນນສຽງ ຈະຈັດຂຶ້ນໃນວັນທີ 04 ຕຸລາ 2025.

**ການເມືອງໄທ:** ວັນທີ 05 ກັນຍາ 2025, ສະພາຜູ້ແທນລາຊະດອນ ໄດ້ຈັດກອງປະຊຸມ ເພື່ອເລືອກຕັ້ງ ນາຍົກລັດຖະມົນຕີຜູ້ໃໝ່, ພາຍຫຼັງສານໄທ ໄດ້ມີຄໍາສັ່ງຕັດສິນໃນວັນທີ 29 ສິງຫາ 2025 ໃຫ້ທ່ານ ນາງ ແພທອງທານ ຊິນນະຫວັດ ພົ້ນຕໍາແໜ່ງດັ່ງກ່າວ ຈາກກໍລະນີ ຄວາມຂັດແຍ່ງຊາຍແດນກັມປູເຈຍ, ກອງປະຊຸມ ໄດ້ລົງຄະແນນສຽງເລືອກເອົາ ທ່ານ ອະນຸທິນ ຊານວີຣະກຸນ, ຈາກພັກ ພູມໃຈໄທ ໃຫ້ເປັນນາຍົກລັດຖະມົນຕີໄທ ຄົນທີ 32 ດ້ວຍຄະແນນ 311 ຕໍ່ 152 ສຽງ, ຫຼາຍກວ່າຄູ່ແຂ່ງ ຄື: ທ່ານ ໄຊກະເສມ ນິຕິສິຣິ, ຈາກພັກເພື່ອໄທ. ຕໍ່ມາໃນວັນທີ 07 ກັນຍາ 2025, ທ່ານ ອະນຸທິນ ຊານວີຣະກຸນ ໄດ້ຮັບພະລາຊະໂອງການແຕ່ງຕັ້ງເປັນນາຍົກລັດຖະມົນຕີ ຈາກເຈົ້າຊີວິດໄທ ໂດຍທ່ານ ອະນຸທິນ ໃຫ້ຄໍາໝັ້ນສັນວ່າ ຈະເຮັດໜ້າທີ່ຢ່າງຊື່ສັດ ແລະ ເຮັດເພື່ອປະຊາຊົນ. ປັດຈຸບັນ ໄທ ກໍາລັງປະເຊີນກັບຫຼາຍບັນຫາຮອບດ້ານ ເຊັ່ນ: ການຂຶ້ນພາສີຂອງ ສ.ອາເມຣິກາ ທີ່ກະທົບການສົ່ງອອກ ແລະ ເສດຖະກິດໂດຍລວມ, ບັນຫາຊາຍແດນໄທ-ກໍາປູເຈຍ. ນອກຈາກນັ້ນ, ທ່ານ ອະນຸທິນ ຍັງມີພາລະກິດໃນການຮັກສາຖານສຽງຈາກປະຊາຊົນ ທີ່ສະໜັບສະໜູນ ການຈັດຕັ້ງລັດຖະບານຄັ້ງນີ້ ໂດຍມີຂໍ້ຕົກລົງທາງການເມືອງ 05 ເງື່ອນໄຂສໍາຄັນ: ການແກ້ໄຂລັດຖະທໍາມະນູນ, ການຍຸບສະພາ ພາຍໃນ 04 ເດືອນ, ການບໍ່ດຶງບຸກຄົນນອກພັນທະມິດເຂົ້າຮ່ວມລັດຖະບານ ເປັນຕົ້ນ.

**ການປະທ້ວງໃນບັນດາປະເທດອາຊີ-ປາຊີຟິກ:** ຕັ້ງແຕ່ທ້າຍເດືອນສິງຫາ 2025 ເປັນຕົ້ນມາ ໄດ້ມີ 4 ປະເທດທີ່ມີຂະບວນການປະທ້ວງຂອງຄົນໄວໜຸ່ມ (Gen Z) ເພື່ອຕໍ່ຕ້ານລັດຖະບານ ເລີ່ມຕົ້ນຈາກອິນໂດເນເຊຍ ໃນວັນທີ 25-30 ສິງຫາ 2025, ການປະທ້ວງທີ່ລັດຖະບານໃຫ້ເງິນຄ່າທີ່ພັກແກ່ສະມາຊິກສະພາ 580 ຄົນເພີ່ມຂຶ້ນ, ຜູ້ປະທ້ວງໄດ້ທໍາລາຍບັນດາສະຖານທີ່ລັດຖະບານ, ປຸ້ນສະດົມເຮືອນຂອງນັກການເມືອງອື່ນໆ, ມີການປະທະກັບເຈົ້າໜ້າທີ່ເຮັດໃຫ້ມີຜູ້ເສຍຊີວິດ 10 ກວ່າຄົນ; ຕໍ່ມາແມ່ນເກີດການປະທ້ວງຢູ່ເນປານ ວັນທີ 8-9 ກັນຍາ 2025 ຊຶ່ງໃນເບື້ອງຕົ້ນ, ກຸ່ມຜູ້ປະທ້ວງ ໄດ້ເດີນຂະບວນປະທ້ວງ ຕໍ່ຕ້ານລັດຖະບານ ທີ່ປະກາດປິດກັ້ນສື່ສັງຄົມອອນລາຍ 26 ສື່ ເຊັ່ນ: ເຟສບຸກ, ອິນສະຕຣາແກຣມ ແລະ ອື່ນໆ, ແຕ່ພາຍຫຼັງການປະທ້ວງທີ່ຮຸນແຮງ, ລັດຖະບານເນປານ ໄດ້ຍົກເລີກມາດຕະການດັ່ງກ່າວແຕ່ການປະທ້ວງ ກໍຍັງສືບຕໍ່ໂດຍຍົກບັນຫາການສໍ້ລາດບັງຫຼວງພາຍໃນປະເທດ ແລະ ຕ້ານການຫຼິ້ນກິນຟຸມເຟືອຍຂອງລູກຫຼານນັກການເມືອງ. ຕໍ່ກັບເຫດການດັ່ງກ່າວ, ລັດຖະບານເນປານ ໄດ້ປະກາດພາວະສຸກເສີນ ແຕ່ກຸ່ມຜູ້ປະທ້ວງໄດ້ລະເມີດຄໍາສັ່ງ ເຂົ້າໄປຈູດອາຄານລັດຖະສະພາ ແລະ ສານ ຊຶ່ງເປັນສະຖານທີ່ສໍາຄັນທາງການເມືອງ ລວມເຖິງເຮືອນຂອງນັກການເມືອງຫຼາຍທ່ານ ໃນນັ້ນເຮັດໃຫ້ພັນລະຍາຂອງອະດີດນາຍົກລັດຖະມົນຕີ ເສຍຊີວິດພາຍໃນເຮືອນ ແລະ ກຸ່ມຜູ້ປະທ້ວງໄດ້ປະທະກັບເຈົ້າໜ້າທີ່ ເຮັດໃຫ້ມີຜູ້ເສຍຊີວິດ ປະມານ 51 ຄົນ ແລະ ບາດເຈັບຫຼາຍກວ່າ 1,300 ຄົນ. ທ່າມກາງສະຖານະການດັ່ງກ່າວ ເພື່ອຮັບຜິດຊອບຕໍ່ເຫດການທີ່ເກີດຂຶ້ນ ນາຍົກລັດຖະມົນຕີເນປານ ແລະ ຄະນະລັດຖະມົນຕີ ໄດ້ປະກາດລາອອກ. ໃນວັນທີ 12 ກັນຍາ 2025, ເນປານ ໄດ້ແຕ່ງຕັ້ງ ທ່ານ ນາງ ຊູຊີລາ ກາກີ (Sushila Karki), ອະດີດປະທານສານຂອງເນປານ ດໍາລົງຕໍາແໜ່ງເປັນຮັກສາການນາຍົກລັດຖະມົນຕີ ຊຶ່ງໄດ້ຮັບການສະໜັບສະໜູນຈາກກຸ່ມຜູ້ປະທ້ວງໃນການດໍາລົງຕໍາແໜ່ງດັ່ງກ່າວ ໂດຍກໍານົດ ຈະຈັດການເລືອກຕັ້ງຂຶ້ນໃນວັນທີ 05 ມີນາ 2026.

ໃນລະຫວ່າງວັນທີ 16-17 ກັນຍາ 2025 ກໍໄດ້ເກີດການປະທ້ວງຢູ່ປະເທດຕີມໍແລັດສະເຕ ເພື່ອຕ້ານການອະນຸມັດງົບປະມານຊື້ລົດໃຫ້ສະມາຊິກສະພາຈໍານວນ 65 ຄັນ ແລະ ໃນວັນທີ 21 ກັນຍາ 2025, ໄດ້ເກີດການປະທ້ວງຢູ່ຟີລິບປິນ ເພື່ອຕ້ານຜູ້ທີ່ກ່ຽວຂ້ອງກັບໂຄງການຕ້ານໄພນໍ້າຖ້ວມ ທີ່ສູນເສຍງົບປະມານຫຼັກຢ່າງມະຫາສານ ແຕ່ບໍ່ສາມາດຈັດການກັບບັນຫາໄພນໍ້າຖ້ວມຂອງປະເທດໄດ້. ແນວໃດກໍດີ, ການປະທ້ວງຢູ່ຕີມໍແລັດສະເຕ ແລະ ຟີລິບປິນ ເປັນການປະທ້ວງທີ່ບໍ່ມີຄວາມຮຸນແຮງຄືກັບອິນໂດເນເຊຍ ແລະ ເນປານ ຍິ່ງກວ່ານັ້ນ, ຜູ້ປະທ້ວງສາມາດໂຄ່ນລົ້ມລັດຖະບານເນປານໄດ້.

**2) ພາກພື້ນເອີຣົບ-ອາເມຣິກາ**

**ບັນຫາຄວາມຂັດແຍ່ງ ລະຫວ່າງ ອູແກຣນ ແລະ ຣັດເຊຍ:** ອູແກຣນ ແລະ ຣັດເຊຍ ຍັງສືບຕໍ່ໂຈມຕີກັນໄປມາ, ວັນທີ 11 ກັນຍາ 2025, ກອງທັບຣັດເຊຍ ໄດ້ເປີດປະຕິບັດການໂຈມຕີຄັ້ງໃຫຍ່ທີ່ອູແກຣນ ດ້ວຍໂດຣນ ຈຳນວນ 415 ລຳ ແລະ ລູກສອນໄຟ ຈຳນວນ 40 ລູກ ເຮັດໃຫ້ມີຜູ້ເສຍຊີວິດ 21 ຄົນ. ຂະນະດຽວກັນ, ທ່ານ ໂອເລັກຊານເດີ ຊີສ໌ສກີ (Oleksandr Syrskyi), ຜູ້ບັນຊາການທະຫານສູງສຸດຂອງອູແກຣນ ຍອມຮັບວ່າ ຣັດເຊຍ ມີຄວາມໄດ້ປຽບເໜືອກວ່າ ທັງໃນດ້ານກຳລັງພົນ ແລະ ອາວຸດຍຸດໂທປະກອນ, ແຕ່ອູແກຣນ ກໍຈະພະຍາຍາມຕ້ານຣັດເຊຍ ໃຫ້ໄດ້.

ໃນຂະນະທີ່ ທ່ານ ໂດນັນ ທຣຳ, ປະທານາທິບໍດີ ສ.ອາເມຣິກາ ຮຽກຮ້ອງໃຫ້ປະເທດສະມາຊິກນາໂຕ້ ນຳໃຊ້ມາດຕະການຂວ້ຳບາດຕໍ່ຣັດເຊຍ ໂດຍການຢຸດຊື້ນ້ຳມັນ ແລະ ເກັບພາສີຕໍ່ສິນຄ້າຈີນໃນອັດຕາ 50%-100% ລວມເຖິງອິນເດຍ ເນື່ອງຈາກສອງປະເທດ ຍັງສືບຕໍ່ຊື້ນ້ຳມັນຈາກຣັດເຊຍ. ສ່ວນ ນາໂຕ້ ແລະ ອີຢູ ພະຍາຍາມຫຼຸດການເພິ່ງພາດ້ານພະລັງງານຂອງຣັດເຊຍ ໃຫ້ໄດ້ຢ່າງສົມບູນໃນປີ 2028, ແຕ່ມີບາງປະເທດສະມາຊິກບໍ່ເຫັນດີ ໂດຍສະເພາະຮົງກາຣີ ແລະ ສະໂລເວນີ ເພາະສອງປະເທດ ຍັງຕ້ອງເພິ່ງພານ້ຳມັນດິບທີ່ສົ່ງຜ່ານທໍ່ Druzhba ຈຳນວນຫຼາຍ. ສ່ວນຣັດເຊຍ ກ່າວວ່າ ມາດຕະການດັ່ງກ່າວ ບໍ່ສາມາດທຳລາຍເສດຖະກິດໄດ້, ຍິ່ງກະຕຸ້ນໃຫ້ເກີດການພັດທະນາພາຍໃນປະເທດຂອງຣັດເຊຍຫຼາຍຂຶ້ນ.

**ການເມືອງນອກແວ:** ວັນທີ 08 ກັນຍາ 2025, ໄດ້ຈັດການເລືອກຕັ້ງລັດຖະສະພາຂຶ້ນຢ່າງເປັນທາງການ ເພື່ອຄັດເລືອກສະມາຊິກສະພາ ຈຳນວນ 169 ບ່ອນນັ່ງ. ຜົນການເລືອກຕັ້ງ ແມ່ນພັກແຮງງານນອກແວ ຊຶ່ງແມ່ນພັກລັດຖະບານ ຍາດໄດ້ 53 ບ່ອນນັ່ງ ເພີ່ມຂຶ້ນ 5 ບ່ອນນັ່ງ; ພັກກ້າວໜ້າ ທີ່ເປັນພັກຂວາຈັດ ໄດ້ຮັບ 47 ບ່ອນນັ່ງ ເພີ່ມຂຶ້ນ 26 ບ່ອນນັ່ງ, ຂະນະທີ່ ພັກອະນຸລັກນິຍົມ ໄດ້ພຽງ 24 ບ່ອນນັ່ງສູນເສຍ 12 ບ່ອນນັ່ງ. ການເລືອກຕັ້ງຄັ້ງນີ້ ສະແດງໃຫ້ເຫັນເຖິງຄວາມນິຍົມພັກການເມືອງຂວາຈັດທີ່ເພີ່ມຂຶ້ນ ຂອງປະຊາຊົນນອກແວ ໂດຍສະເພາະກຸ່ມໄວໜຸ່ມ ຊຶ່ງພວກເຂົາເຈົ້າໄດ້ຮັບຂ່າວສານຕ້ານພັກຂອງລັດຖະບານ, ການໂຄສະນາຫາສຽງ, ການຕຳນິກຸ່ມຄົນຮັ່ງມີຈາກພັກຕໍ່ຕ້ານລັດຖະບານ. ຢ່າງໃດກໍຕາມ ຜົນການເລືອກຕັ້ງ ບໍ່ມີພັກໃດໄດ້ບ່ອນນັ່ງເກີນ 50%, ສະນັ້ນ ພັກແຮງງານນອກແວ ຍັງຈະຕ້ອງມີການເຈລະຈາຈັດຕັ້ງລັດຖະບານປະສົມຮ່ວມກັບພັກການເມືອງອື່ນ ເພື່ອບໍລິຫານປະເທດ.

**ການເມືອງຝຣັ່ງ:** ໃນວັນທີ 08 ກັນຍາ 2025, ສະມາຊິກສະພາ 364 ສຽງໄດ້ພ້ອມກັນລົງມະຕິບໍ່ໄວ້ວາງໃຈ ຕໍ່ທ່ານ ຟອງຊົວ ບາຍຣູ (Francois Bayrou), ນາຍົກລັດຖະມົນຕີ ໂດຍຄະແນນສຽງດັ່ງກ່າວ ມາຈາກພັນທະມິດຝ່າຍຊ້າຍ ແລະ ພັກຝ່າຍຂວາ ເພື່ອຮ່ວມມືກັນໂຄນລົ້ມລັດຖະບານ ຫຼັງຈາກເກີດທາງຕັນແກ່ຍາວຫຼາຍເດືອນ ກ່ຽວກັບມາດຕະການຣັດສາຍແອວ. ພາຍຫຼັງການລົງປະຊາມະຕິດັ່ງກ່າວ, ທ່ານ ມາຄຣົງ, ປະທານາທິບໍດີຝຣັ່ງ ໄດ້ແຕ່ງຕັ້ງທ່ານ ເຊບັດສຕຽນ ເລີກົນູ (Sebastien Lecornu), ອະດີດລັດຖະມົນຕີກະຊວງປ້ອງກັນປະເທດ ໃຫ້ດຳລົງຕຳແໜ່ງເປັນນາຍົກລັດຖະມົນຕີຝຣັ່ງຄົນໃໝ່ ຊຶ່ງເປັນຄົນທີ 05 ໃນຮອບ 02 ປີ. ຫຼັງຈາກນັ້ນ, ໃນວັນທີ 10 ກັນຍາ 2025, ໄດ້ເກີດການປະທ້ວງຕໍ່ຕ້ານລັດຖະບານທົ່ວປະເທດ ຈຳນວນ 250,000 ຄົນ ໂດຍໃສ່ຊື່ວ່າ Block Everything ເພື່ອຕໍ່ຕ້ານການຕັດງົບປະມານ ແລະ ຄວາມບໍ່ໝັ້ນຄົງທາງການເມືອງ.

**ການເມືອງອັງກິດ:** ໃນວັນທີ 13 ກັນຍາ 2025, ເກີດການປະທ້ວງທີ່ນະຄອນຫຼວງລອນດອນ ພາຍໃຕ້ຫົວຂໍ້: "Unite the Kingdom'' ເພື່ອຕໍ່ຕ້ານຜູ້ອົບພະຍົບ ນຳໂດຍ ທ່ານ ທອມມີ່ ໂຣບິນສັນ, ນັກເຄື່ອນໄຫວທາງການເມືອງ ທີ່ຕໍ່ຕ້ານຜູ້ອົບພະຍົບ ແລະ ຕໍ່ຕ້ານສາສະໜາອິດສະລາມ ການເຄື່ອນໄຫວຄັ້ງນີ້ ມີຜູ້ເຂົ້າຮ່ວມປະມານ 150,000 ຄົນ, ກຸ່ມຜູ້ປະທ້ວງໄດ້ປະທະກັບເຈົ້າໜ້າທີ່ ເຮັດໃຫ້ມີຜູ້ໄດ້ຮັບບາດເຈັບ 30 ຄົນ ແລະ ຈັບຜູ້ປະທ້ວງໄດ້ 25 ຄົນ.

**ການເມືອງ ສ.ອາເມຣິກາ**: ວັນທີ 06 ກັນຍາ 2025, ທ່ານ ໂດນັນ ທຣຳ, ປະທານາທິບໍດີ ສ.ອາເມຣິກາ ໄດ້ລົງນາມໃນຄຳສັ່ງພິເສດ ເພື່ອປ່ຽນຊື່ກະຊວງປ້ອງກັນປະເທດ ກັບ ໄປເປັນກະຊວງສົງຄາມ ຖືເປັນການປ່ຽນແປງຄັ້ງປະຫວັດສາດອີກຄັ້ງ ສະແດງເຖິງຄວາມກະຫາຍສົງຄາມຂອງ ສ.ອາເມຣິກາ. ກະຊວງປ້ອງກັນປະເທດຂອງ ສ.ອາເມຣິກາ ເຄີຍຖືກເອີ້ນວ່າ ກະຊວງສົງຄາມ ຈົນຮອດປີ 1949. ຫຼັງສົງຄາມໂລກຄັ້ງທີ II, ລັດຖະສະພາ ໄດ້ປ່ຽນຊື່ດັ່ງກ່າວ ເປັນກະຊວງປ້ອງກັນປະເທດເພື່ອເນັ້ນໜັກເຖິງບົດຂອງກອງທັບໃນການປ້ອງກັນ ແລະ ຫຼີກລ່ຽງຄວາມຂັດແຍ່ງໃນຍຸກນິວເຄຼຍ.

**ກອງປະຊຸມສະມັດຊາໃຫຍ່ແຫ່ງສະຫະປະຊາຊາດ ຄັ້ງທີ 80:** ກອງປະຊຸມ ຈັດຂຶ້ນໃນວັນທີ 09 ກັນຍາ 2025, ທີ່ນິວຢອກ, ສ.ອາເມຣິກາ ມີປະມຸກລັດ, ຜູ້ແທນຂັ້ນສູງຫຼາຍກວ່າ 150 ປະເທດ ເຂົ້າຮ່ວມ ພາຍໃຕ້ຫົວຂໍ້: ຮ່ວມກັນເພື່ອອະນາຄົດທີ່ດີ (Better together) ໃນປີນີ້ ບັນຫາການຮັບຮອງລັດປະແລັດສະຕິນຖືເປັນບັນຫາສຳຄັນ ຄຽງຄູ່ກັບ

ການປ່ຽນແປງຂອງດິນຟ້າອາກາດ, ປັນຍາປະດິດ, ວິກິດການອາຫານທົ່ວໂລກ ແລະ ຄວາມຂັດແຍ່ງທົ່ວໂລກ. ການເຂົ້າຮ່ວມກອງປະຊຸມຂອງຜູ້ນໍາລະດັບສູງ ໄດ້ເລີ່ມແຕ່ວັນທີ 23-30 ກັນຍາ 2025, ຊຶ່ງໃນວັນທີ 23 ກັນຍາ 2025, ທ່ານ ໂດນັນ ທຣໍາ, ປະທານາທິບໍດີ ສ.ອາເມຣິກາ ໄດ້ຂຶ້ນກ່າວປາໄສຫຼາຍບັນຫາສຳຄັນ ໂດຍສະເພາະບັນຫາຜູ້ອົບພະຍົບ, ຮຽກຮ້ອງໃຫ້ທົ່ວໂລກຫຼຸດຈຳນວນຜູ້ອົບພະຍົບ, ຍົກເລີກທຸກນະໂຍບາຍ ທີ່ກ່ຽວກັບສະພາບອາກາດໂດຍບໍ່ເຫັນດີຕໍ່ການສ້າງພະລັງງານສະອາດ ເພື່ອທົດແທນພະລັງງານຖ່ານຫີນ; ທ່ານ ທຣໍາ ໄດ້ວິຈານ ສປຊ ວ່າ ບໍ່ສາມາດຢຸດຕິສົງຄາມໃນພາກພື້ນ ແລະ ສາກົນໄດ້ ໃນຂະນະທີ່ ຕົນເອງສາມາດແກ້ໄຂຂໍ້ຂັດແຍ່ງໄດ້ 07 ຂໍ້ຂັດແຍ່ງແລ້ວ. ສ່ວນຄວາມຂັດແຍ່ງລະຫວ່າງ ອູແກຣນ ທ່ານ ກ່າວວ່າ ນາໂຕ້ ຄວນຢຸດຊື້ນ້ຳມັນຈາກຣັດເຊຍ ເພາະເປັນການສະໜັບສະໜູນງົບປະມານໃຫ້ຣັດເຊຍເຮັດສົງຄາມກັບນາໂຕ້ເອງ. ຂະນະດຽວກັນ, ຖ້າຫາກຣັດເຊຍ ບໍ່ຍອມເຈລະຈາເພື່ອຢຸດຕິສົງຄາມ ຈະຖືກ ສ.ອາເມຣິກາ ຂຶ້ນພາສີສິນຄ້າຢ່າງໜັກ ແລະ ສະເໜີໃຫ້ເອີຣົບ ຕ້ອງຂຶ້ນພາສີສິນຕໍ່ຣັດເຊຍເຊັ່ນກັນ. ສໍາລັບຄວາມຂັດແຍ່ງເຂດກາຊາ ເຖິງແມ່ນວ່າ ຫຼາຍປະເທດຈະໃຫ້ການຮັບຮອງລັດປະແລັດສະຕິນ ແຕ່ທ່ານທຣໍາ ຄັດຄ້ານ ເພາະຖືວ່າການຮັບຮອງດັ່ງກ່າວເປັນການໃຫ້ລາງວັນແກ່ກຸ່ມຮາມາສ ຫາກບໍ່ແມ່ນວິທີຢຸດຕິຄວາມຂັດແຍ່ງທີ່ແທ້ຈິງ.

ສ່ວນທ່ານ ເອມານູແອນ ມາຄຣົງ, ປະທານາທິບໍດີຝຣັ່ງ ກໍໄດ້ກ່າວໃນເວທີ ໂດຍລະບຸເຖິງ ຄວາມຂັດແຍ່ງໃນເຂດກາຊາ ວ່າ ຖ້າຕ້ອງການສັນຕິພາບໃນເຂດກາຊາ ຕ້ອງເລີ່ມຈາກການຍອມຮັບປາແລັດສະຕິນ ເປັນລັດ ສາກ່ອນ ແລະ ຝຣັ່ງ ຍອມຮັບປາແລັດສະຕິນ ເປັນລັດເອກະລາດ ຢ່າງເປັນທາງການແລ້ວ, ຊຶ່ງກ່ອນໜ້ານີ້ ມີ ອັງກິດ, ການາດາ, ອົດສະຕຣາລີ ຕ່າງເປັນພັນທະມິດທີ່ດີ ກັບ ສ.ອາເມຣິກາ ກໍປະກາດຮັບຮອງປາແລັດສະຕິນ ເປັນລັດເຊັ່ນກັນ ເຮັດໃຫ້ປັດຈຸບັນ ມີ 158 ປະເທດ ຈາກສະມາຊິກ ສປຊ 193 ປະເທດ ທີ່ຍອມຮັບປາແລັດສະຕິນ ເປັນລັດ.

**3) ພາກພື້ນຕາເວັນອອກກາງ**

**ບັນຫາຄວາມຂັດແຍ່ງເຂດກາຊາ**: ວັນທີ 13 ກັນຍາ 2025, ກອງທັບອິດສະຣາແອນ ສືບຕໍ່ແຜນການຍຶດຄອງເຂດກາຊາ ຕໍ່ໂດຍໄດ້ໂຈມຕີຢ່າງໜັກໜ່ວງທາງອາກາດ ເຮັດໃຫ້ມີຜູ້ເສຍຊີວິດ 70 ຄົນ ແລະ ໄດ້ຍົກລະດັບການໂຈມຕີທາງພາກພື້ນດິນ ໂດຍສົ່ງທະຫານເຂົ້າໄປໃນພື້ນທີ່ ປະມານ 200,000 ຄົນ ຊຶ່ງເປັນການໂຈມຕີຮຸນແຮງໃນຮອບ 02 ປີ ນັບແຕ່ເກີດຄວາມຂັດແຍ່ງແຕ່ວັນທີ 07 ຕຸລາ 2023 ເປັນຕົ້ນມາ, ມີຜູ້ເສຍຊີວິດທັງໝົດປະມານ 65,000 ຄົນ ແລະ ບາດເຈັບ 165,000 ຄົນ. ຂະນະດຽວກັນ, ກອງທັບອິດສະຣາແອນ ໄດ້ປະກາດໃຫ້ປະຊາຊົນປາແລັດສະຕິນ ຫຼາຍກວ່າ 250,000 ຄົນ ອົບພະຍົບອອກຈາກພື້ນທີ່ໄປຍັງເຂດມະນຸດສະທຳ ໃນເມືອງ Al-Mawasi ພາກໃຕ້ຂອງເຂດກາຊາ, ຂະນະທີ່ ປະຊາຊົນຍັງຂາດເຂີນອຸປະກອນການແພດ ແລະ ອາຫານດ້ານໂພສະນາການຮຸນແຮງ. ນອກຈາກນັ້ນ, ກອງປະຊຸມສະມັດຊາໃຫຍ່ແຫ່ງສະຫະປະຊາຊາດ ໄດ້ມີມະຕິເຫັນດີຮັບຮອງຮ່າງຖະແຫຼງການນິວຢອກ ວ່າດ້ວຍການຢຸດຕິຄວາມຂັດແຍ່ງ ລະຫວ່າງ ອິດສະຣາແອນ ແລະ ປາແລັດສະຕິນໂດຍສັນຕິ ແລະ ດຳເນີນການຕາມແນວທາງແກ້ບັນຫາແບບສອງລັດ, ລວມເຖິງການຈັດຕັ້ງລັດປາແລັດສະຕິນທີ່ຍືນຍົງ ແລະ ມີອຳນາດອະທິປະໄຕ, ການປົດອາວຸດກຸ່ມຮາມາສ ແລະ ປິດກັ້ນບໍ່ໃຫ້ກຸ່ມຮາມາສປົກຄອງເຂດກາຊາ ລວມເຖິງການເຮັດໃຫ້ອິດສະຣາແອນ ແລະ ປະເທດອາຣັບ ກັບຄືນສູ່ສະພາບປົກກະຕິ. ຕໍ່ກັບເຫດການທີ່ອິດສະຣາແອນໂຈມຕີກາຕາ ໃນວັນທີ 09 ກັນຍາ 2025 ເພື່ອສັງຫານແກນນຳກຸ່ມຮາມາສ, ວັນທີ 11 ກັນຍາ 2025, ສະຫະປະຊາຊາດ (UNSC) ໄດ້ອອກຖະແຫຼງການປະນາມການກະທຳດັ່ງກ່າວ ພ້ອມດຽວກັນນັ້ນ, ໃນວັນທີ 15 ກັນຍາ 2025, ບັນດາປະເທດອາຣັບ ແລະ ອິດສະລາມ ໄດ້ຈັດກອງປະຊຸມສຸດຍອດຂຶ້ນທີ່ນະຄອນຫຼວງໂດຮາ, ປະເທດກາຕາ ແລະ ໄດ້ອອກຖະແຫຼງການປະນາມອິດສະຣາແອນ ຢ່າງຮຸນແຮງຕໍ່ການໂຈມຕີກາຕາ ພ້ອມທັງຮຽກຮ້ອງໃຫ້ສາກົນດຳເນີນການຂວ່ຳບາດ, ການລະງັບການສົ່ງອາວຸດ ແລະ ການທົບທວນຄືນການພົວພັນທາງການທູດ ແລະ ເສດຖະກິດ ໃນກອງປະຊຸມ ຍັງມີການສະເໜີຈັດຕັ້ງກອງກຳລັງທາງທະຫານ ນາໂຕ້ແຫ່ງອາຣັບ ໂດຍມີເອຢິບ ແລະ ປາກິດສະຖານ ເປັນແກນນຳ ເພື່ອຕິດຕາມສະຖານະການຂອງອິດສະຣາແອນໃນພາກພື້ນ. ຕໍ່ມາໃນວັນທີ 18 ກັນຍາ 2025, ອາຣັບບີ ຊາອຸດິດ ແລະ ປາກິດສະຖານ ໄດ້ລົງນາມວ່າດ້ວຍ ການປ້ອງກັນໄພຮ່ວມກັນທາງຍຸດທະສາດ.

## II. ການເຄື່ອນໄຫວຂອງການນຳການຂັ້ນສູງຂອງພັກ ປະຊາຊົນ ປະຕິວັດລາວ

### 1) ໂທລະເລກອວຍພອນ ວັນສະຖາປະນາ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ຄົບຮອບ 80 ປີ

ເນື່ອງໃນໂອກາດສະເຫຼີມສະຫຼອງວັນໄຊຊະນະການປະຕິວັດ ເດືອນສິງຫາ ແລະ ວັນສະຖາປະນາ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ຄົບຮອບ 80 ປີ (2/9/1945-2/9/2025), ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ, ປະທານປະເທດ, ສະພາແຫ່ງຊາດ, ລັດຖະບານ, ແນວລາວສ້າງຊາດ ໄດ້ສົ່ງໂທລະເລກອວຍພອນ ເຖິງຄະນະບໍລິຫານງານສູນກາງພັກ ກອມມູນິດຫວຽດນາມ, ປະທານປະເທດ, ສະພາແຫ່ງຊາດ, ລັດຖະບານ ແລະ ແນວໂຮມປະເທດຊາດຫວຽດນາມ, ໂດຍມີເນື້ອໃນດັ່ງນີ້:

ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ, ປະທານປະເທດ, ສະພາແຫ່ງຊາດ, ລັດຖະບານ ແລະ ແນວລາວສ້າງຊາດ ຂໍສົ່ງຄຳອວຍພອນໄຊປະເສີດ ແລະ ຄວາມສາມັກຄີມິດຕະພາບອັນສະໜິດສະໜົມ ຖານສະຫາຍອ້າຍນ້ອງ ມາຍັງ ຄະນະບໍລິຫານງານສູນກາງພັກ ກອມມູນິດຫວຽດນາມ, ປະທານປະເທດ, ສະພາປຫ່ງຊາດ, ລັດຖະບານ ແລະ ແນວໂຮມປະເທດຊາດຫວຽດນາມ.

ກ່ອນໜ້ານີ້ 80 ປີ ໂດຍພາຍໃຕ້ການນຳພາອັນປີຊາສາມາດ ແລະ ສະຫຼາດສ່ອງໃສ ຂອງພັກກອມມູນິດຫວຽດນາມ ທີ່ມີກຽດສະຫງ່າ, ປະຊາຊົນຫວຽດນາມອ້າຍນ້ອງ ໄດ້ດຳເນີນພາລະກິດປະຕິວັດ ຕໍ່ສູ້ຕ້ານພວກລ່າເມືອງຂຶ້ນ ຢ່າງພິລະອາດຫານ, ດຸເດືອດ, ຊ້ຽວຂາດ ແລະ ເຕັມໄປດ້ວຍຄວາມເສຍ ສະຫຼະອັນໃຫຍ່ຫຼວງ ເປັນເວລາຍາວນານຫຼາຍທົດສະວັດ ເພື່ອຍາດເອົາເອກະລາດມາສູ່ປະຊາຊົນຄັ້ງທຳອິດໃນປີ 1945 ແລະ ສືບຕໍ່ ຕໍ່ສູ້ຕ້ານຈັກກະພັດຜູ້ຮຸກຮານ ໂດຍສົມທົບລະຫວ່າງ ກຳລັງແຮງແຫ່ງຄວາມສາມັກຄີອັນເປັນປຶກແຜ່ນຂອງປະຊາຊົນຫວຽດນາມ, ກຳລັງແຮງຂອງຍຸກສະໄໝ ແລະ ການສະໜັບສະໜູນຊ່ວຍ ເຫຼືອຂອງເພື່ອນມິດສາກົນ ແລະ ດ້ວຍຄວາມປາຖະໜາອັນສູງສົ່ງ ດັ່ງປະທານ ໂຮ່ຈີມິນ ຜູ້ຍິ່ງໃຫຍ່ ໄດ້ກ່າວໄວ້ວ່າ “ບໍ່ມີສິ່ງໃດປະເສີດ ຍິ່ງກວ່າເອກະລາດ ແລະ ເສລີພາບ”, ກອງທັບ ແລະ ປະຊາຊົນຫວຽດນາມ ໄດ້ຕໍ່ສູ້ຢ່າງອົງອາດກ້າແກ່ນ ແລະ ຍາດໄດ້ໄຊຊະນະເປັນແຕ່ລະບາດກ້າວຢ່າງຕໍ່ເນື່ອງ ກ້າວໄປເຖິງການປົດປ່ອຍພາກໃຕ້ຫວຽດນາມ, ທ້ອນໂຮມປະເທດເປັນເອກະພາບອັນໜຶ່ງອັນດຽວ ໃນປີ 1975 ແລະ ສືບຕໍ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດສັງຄົມນິຍົມ ໂດຍຍາດໄດ້ບັນດາຜົນສຳເລັດອັນໃຫຍ່ຫຼວງ, ຮອບດ້ານ, ມີຄວາມໝາຍປະຫວັດສາດ, ໂດຍສະເພາະແມ່ນ ບັນດາຜົນສຳເລັດຮອບດ້ານໃນພາລະກິດປ່ຽນແປງໃໝ່ ອັນໄດ້ເຮັດໃຫ້ ສສ ຫວຽດນາມ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ເສດຖະກິດມີການຂະຫຍາຍຕົວດ້ວຍຈັງຫວະໄວ ແລະ ຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງດີຂຶ້ນເປັນລຳດັບເລື້ອຍໆມາ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ມີຄວາມເຂັ້ມແຂງ, ການພົວພັນຮ່ວມມືກັບຕ່າງປະເທດໄດ້ຮັບການເປີດກວ້າງ, ບົດບາດອິດທິພົນຂອງ ສສ ຫວຽດນາມ ນັບມື້ນັບສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ພວກຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ແລະ ຖືບັນດາໄຊຊະນະດັ່ງກ່າວ ເປັນບົດຮຽນອັນໃຫຍ່ຫຼວງ, ທັງເປັນກຳລັງໃຈອັນແຮງກ້າໃຫ້ແກ່ ພວກຂ້າພະເຈົ້າ ໃນການນຳພາພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງຕົນ; ເຊື່ອໝັ້ນຢ່າງໜັກແໜ້ນວ່າ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສ ແລະ ຖືກຕ້ອງຂອງພັກກອມມູນິດຫວຽດນາມ ໂດຍແມ່ນ ສະຫາຍເລຂາທິການໃຫຍ່ ໂຕເລິມ ເປັນຜູ້ນຳໜ້ານັ້ນ, ປະຊາຊົນຫວຽດນາມ ຈະສືບຕໍ່ຍາດໄດ້ຜົນສຳເລັດໃໝ່ ໃຫຍ່ຫຼວງກວ່າເກົ່າ ໃນການປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກ ໃນໄລຍະທ້າຍສະໄໝໄດ້ຢ່າງມີໄຊ ແລະ ກ້າວໄປສູ່ການດຳເນີນກອງປະຊຸມໃຫຍ່ ຄັ້ງທີ XIV ຂອງພັກ ໃຫ້ສຳເລັດຜົນຢ່າງຈົບງາມ ເພື່ອສືບຕໍ່ສ້າງປະເທດຊາດຫວຽດນາມ ໃຫ້ກາຍເປັນປະເທດອຸດສາຫະກຳທີ່ທັນສະໄໝ, ບັນລຸເປົ້າໝາຍ ປະຊາຊົນຮັ່ງມີ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ພວກຂ້າພະເຈົ້າ ມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ເຫັນວ່າ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ ແລະ ຫວຽດນາມທີ່ ປະທານ ໂຮ່ຈີມິນ ຜູ້ຍິ່ງໃຫຍ່, ປະທານ ໄກສອນ ພົມວິຫານ ແລະ ປະທານ ສຸພານຸວົງ ທີ່ແສນເຄົາລົບຮັກ ເປັນຜູ້ລິເລີ່ມ ແລະ ໄດ້ຜ່ານການທົດສອບໃນແປວໄຟປະຕິວັດ ມາເປັນເວລາຫຼາຍທົດສະວັດນັ້ນ ໄດ້ກາຍເປັນມູນມໍລະດົກ

ລວມອັນລ້ຳຄ່າ, ເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງສອງຊາດ, ເປັນໜຶ່ງໃນປັດໄຈຕັດສິນໄຊຊະນະຂອງການປະຕິວັດ ຢູ່ແຕ່ລະປະເທດ ແລະ ມາເຖິງປັດຈຸບັນ ຍິ່ງໄດ້ຮັບການເອົາໃຈໃສ່, ຖະນຸຖະໜອມ, ເພີ່ມພູນຄູນສ້າງ ແລະ ເສີມຂະຫຍາຍເຂົ້າສູ່ລວງເລິກໃນທຸກຂົງເຂດ ແລະ ແຕກດອກອອກຜົນຢ່າງບໍ່ຢຸດຢັ້ງ, ນຳເອົາຜົນປະໂຫຍດຕົວຈິງ ມາສູ່ປະຊາຊົນສອງຊາດ ລາວ-ຫວຽດນາມ. ພວກຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງ ແລະຂອບໃຈຢ່າງຈິງໃຈມາຍັງ ພັກ, ລັດ ແລະ ປະຊາຊົນ ຫວຽດນາມ ອ້າຍນ້ອງ ທີ່ໄດ້ໃຫ້ການຊ່ວຍເຫຼືອອັນໃຫຍ່ຫຼວງ, ລ້ຳຄ່າ, ມີປະສິດທິຜົນ ແລະ ທັນການ ບົນຈິດໃຈ ສະຫາຍອ້າຍນ້ອງ, ແບບເຂົ້າເມັດຫັກຜັກເສັ້ນແບ່ງ, ບໍລິສຸດພຸດຜ່ອງແກ່ພາລະກິດຕໍ່ສູ້ປົດປ່ອຍປະເທດຊາດໃນເມື່ອກ່ອນ ກໍຄື ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດພວກຂ້າພະເຈົ້າ ໃນປັດຈຸບັນ.

ນອກຈາກນັ້ນ, ສະຫາຍ ບຸນເຫຼືອ ພັນດານຸວົງ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປະຕິວັດລາວ ຕາງໜ້າໃຫ້ ຄະນະພັກ, ຄະນະນຳ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປະຕິວັດລາວ ໄດ້ສົ່ງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ແລະ ຄຳອວຍພອນໄຊອັນປະເສີດ, ຄວາມສາມັກຄີຮັກແພງອັນສະໜິດສະໜົມ ຖານສະຫາຍອ້າຍນ້ອງ ມາຍັງ ສະຫາຍ ເລ ຮວາຍ ຈຸງ, ເລຂາທິການສູນກາງພັກ, ຮັກສາການ ລັດຖະມົນຕີກະຊວງການຕ່າງປະເທດຫວຽດນາມ ພ້ອມດ້ວຍ ຄະນະພັກ, ຄະນະນຳ ແລະ ພະນັກງານ ກະຊວງການຕ່າງປະເທດຫວຽດນາມ ທຸກຖ້ວນໜ້າ.

## III. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ

### 1) ກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ III ຂອງອົງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ



ກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ III ຂອງອົງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດຂຶ້ນໃນວັນທີ 09 ກັນຍາ 2025 ທີ່ສະໂມສອນຂອງ ຄະນະໂຄສະນາອົບຮົມສູນກາງພັກ (ຫຼັກ 6), ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ສະຫາຍ ບຸນເຫຼືອ ພັນດານຸວົງ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ເປັນກຽດເຂົ້າຮ່ວມຂອງ ສະຫາຍ ສະເຫຼີມໄຊ ກົມມະສິດ, ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ; ມີແຂກຖືກເຊີນຈາກບັນດາອົງການອ້ອມຂ້າງສຳນັກງານສູນກາງພັກ; ກະຊວງການຕ່າງປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ, ມີບັນດາສະຫາຍສະມາຊິກພັກອາວຸໂສ ແລະ ບັນດາສະມາຊິກພັກສົມບູນທົ່ວອົງຄະນະພັກ ຄຕພ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມຄັ້ງນີ້ ໄດ້ເປັນເອກະພາບກັນຮັບຮອງເອົາບົດລາຍງານການເມືອງ ແລະ ບົດສຳຫຼວດການນຳພາລວມຂອງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ສະໄໝທີ II ພ້ອມດ້ວຍ ແຜນພັດທະນາຄະນະພົວພັນຕ່າງປະເທດສູນກາງພັກ ໄລຍະ ປີ 2025-2029, ພ້ອມຕີລາຄາເລິກເຊິ່ງຢ່າງກົງໄປກົງມາ ຕໍ່ການຈັດຕັ້ງປະຕິບັດບັນດາມະຕິກອງປະຊຸມໃຫຍ່ ຄັ້ງທີ II ຂອງອົງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກຜ່ານມາ ໂດຍໄດ້ຍົກໃຫ້ເຫັນຜົນສຳເລັດດ້ານດີ, ດ້ານອ່ອນ-ຂໍ້ຄົງຄ້າງ, ສາເຫດ, ບົດຮຽນທີ່ຖອດຖອນໄດ້, ເຊິ່ງໄດ້ສ້າງພື້ນຖານສຳຄັນໃຫ້ແກ່ການສືບຕໍ່ປັບປຸງ, ຍົກລະດັບປະສິດທິພາບ ໃນການຈັດຕັ້ງປະຕິບັດວຽກງານຂອງຄະນະພົວພັນຕ່າງປະເທດສູນກາງພັກ ໃຫ້ສາມາດເຮັດສຳເລັດໜ້າທີ່ການເມືອງຂອງຕົນໃນຊຸມປີຕໍ່ໜ້າ, ທັງຮັບປະກັນໃນການເປັນເສນາທິການວຽກງານຕ່າງປະເທດ ໃຫ້ສູນກາງພັກຢ່າງໜັກແໜ້ນ.

ກອງປະຊຸມໃຫຍ່ ໄດ້ພ້ອມກັນໃຊ້ສິດປະຊາທິປະໄຕຂອງຕົນ ປ່ອນບັດຄັດເລືອກເອົາຄະນະບໍລິຫານງານພັກຄະນະພົວພັນຕ່າງປະເທດສູນກາງພັກ ຊຸດທີ III ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ, ເຊິ່ງມີຜູ້ອອກຮັບສະໝັກເລືອກຕັ້ງ ທັງໝົດ 9 ສະຫາຍ, ຍິງ 1 ສະຫາຍ, ເລືອກເອົາ 7 ສະຫາຍ, ຍິງ 1 ສະຫາຍ. ໃນນີ້, ກອງປະຊຸມຄັ້ງປະຖົມມະລຶກ ໄດ້ຮັບຮອງເອົາ ສະຫາຍ ບຸນເຫຼືອ ພັນດານຸວົງ ເປັນເລຂາຄະນະບໍລິຫານງານພັກ; ສະຫາຍ ວາລະໄຊ ເລັ່ງສະຫວັດ ເປັນຮອງເລຂາຄະນະພັກ, ທັງເປັນປະທານກວດກາພັກ; ສະຫາຍ ນາງ ສຸກສະຫວັນ ແກ້ວວິໄລວັນ ເປັນຮອງປະທານກວດກາ.

ໃນຕອນທ້າຍ, ກອງປະຊຸມໃຫຍ່ ໄດ້ຮັບຟັງຄຳເຫັນໂອ້ລົມຊີ້ນຳ ຂອງ ສະຫາຍ ສະເຫຼີມໄຊ ກົມມະສິດ, ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີແຫ່ງ ສປປ ລາວ, ເຊິ່ງໄດ້ຕີລາຄາສູງຕໍ່ຜົນສຳເລັດໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ II ຂອງອົງຄະນະພັກຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ການນຳພາ-ຊີ້ນຳຂອງບັນດາສະຫາຍຄະນະບໍລິຫານງານພັກ ໃນການປະຕິບັດໜ້າທີ່ການເມືອງ ທີ່ຂັ້ນເທິງມອບໝາຍໃຫ້ ແລະ ຍາດໄດ້ຜົນສຳເລັດໃນຫຼາຍດ້ານ. ພ້ອມກັນນີ້, ສະຫາຍ ສະເຫຼີມໄຊ ກົມມະສິດ ຍັງໄດ້ຊີ້ນຳໃຫ້ສືບຕໍ່ເສີມຂະຫຍາຍດ້ານດີທີ່ຕັ້ງໜ້າ ແລະ ປັບປຸງແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງໃນແຕ່ລະດ້ານ ແລະ ຮຽກຮ້ອງໃຫ້ຄະນະບໍລິຫານງານພັກຊຸດໃໝ່ ສືບຕໍ່ນຳພາ-ຊີ້ນຳ ຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດມະຕິກອງປະຊຸມໃຫຍ່ໃນຄັ້ງນີ້ ໃຫ້ເຂົ້າສູ່ລວງເລິກ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ຈະຕ້ອງໄດ້ສູ້ຊົນນຳພາ-ຊີ້ນຳ ການຈັດຕັ້ງປະຕິບັດວຽກງານພົວພັນຕ່າງປະເທດ ຂອງພັກ, ໂດຍຍຶດໝັ້ນແນວທາງການຕ່າງປະເທດຂອງພັກ ທີ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ວາງອອກ ໃຫ້ມີຜົນສຳເລັດຍິ່ງໃຫຍ່ກວ່າເກົ່າ.

**2) ປາຖະກະຖາ ວັນຍຶດອຳນາດ 23 ສິງຫາ 1945 ແລະ 23 ສິງຫາ 1975, ວັນຊາດ ສສ ຫວຽດນາມ ຄົບຮອບ 80 ປີ ( 2/9/1945-2/9/2025) ແລະ ພິທີປະກາດການຈັດຕັ້ງຂອງ ຄະນະພົວພັນຕ່າງປະເທດສູນກາງພັກ**






ໃນວັນທີ 18 ກັນຍາ 2025, ທີ່ສຳນັກງານ ຄຕພ ໄດ້ຈັດພິທີປາຖະກະຖາ ເອກະສານສຳຄັນຄື: ວັນຍຶດອຳນາດ 23 ສິງຫາ 1945 ແລະ 1975; ວັນຊາດ ສສ ຫວຽດນາມ ຄົບຮອບ 80 ປີ, ໃຫ້ກຽດເປັນປະທານ ແລະ ປາຖະກະຖາໂດຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ. ມີບັນດາຄະນະບໍລິຫານງານພັກ, ຄະນະກົມ ແລະ ພະນັກງານທົ່ວ ຄຕພ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ຍົກໃຫ້ເຫັນມູນເຊື້ອປະຫວັດຄວາມເປັນມາ, ການຕໍ່ສູ້ກູ້ຊາດອັນພິລະອາດຫານຂອງປະຊາຊົນລາວບັນດາເຜົ່າ ເພື່ອໃຫ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງເຖິງຄວາມເສຍສະຫຼະ, ຄວາມສາມັກຄີຂອງປວງຊົນລາວທັງຊາດ; ໄຊຊະນະດັ່ງກ່າວແມ່ນໝາກຜົນແຫ່ງການຕໍ່ສູ້ປະຕິວັດອັນຍຶດເຍື້ອຍາວນານ ຂອງປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງ ພັກປະຊາຊົນ ປະຕິວັດລາວ ໂດຍນຳໃຊ້ 03 ບາດຄ້ອນຍຸດທະສາດເພື່ອຍຶດອຳນາດການປົກຄອງໃນທົ່ວປະເທດແບບ “ ບົວບໍ່ຊ້ຳ ນ້ຳບໍ່ຂຸ່ນ” ນັ້ນສະແດງເຖິງການນຳພາອັນສະຫຼາດສ່ອງໃສຂອງພັກ ແລະ ທັງເປັນໄຊຊະນະຂອງຄວາມສາມັກຄີຮ່ວມສູ້ຮົບລະຫວ່າງ ປະຊາຊົນ 3 ຊາດ ອິນດູຈີນ: ລາວ, ຫວຽດນາມ ແລະ ກຳປູເຈຍ ທີ່ໄດ້ຄຽງບ່າຄຽງໄຫລ່ກັນຕ້ານສັດຕູໂຕດຽວກັນ.

ຈາກນັ້ນ, ສະຫາຍຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ທວນຄືນປະຫວັດການກຳເນີດ, ເຕີບໃຫຍ່ຂະຫຍາຍຕົວ ແລະ ມູນເຊື້ອອັນສະຫງ່າງາມ ແລະ ຜົນງານທີ່ພົ້ນເດັ່ນຂອງ ສສ ຫວຽດນາມ ຕະຫຼອດໄລຍະ 80 ປີຜ່ານມາ; ໂດຍໄດ້ຍົກໃຫ້ເຫັນ 3 ເນື້ອໃນໃຫຍ່ ເປັນຕົ້ນ: 1) ຄວາມໝາຍສຳຄັນຂອງການປະຕິວັດເດືອນສິງຫາ 1945

ທີ່ໄດ້ສິ່ງຜົນສະທ້ອນອັນໃຫຍ່ຫຼວງໃນການສ້າງເງື່ອນໄຂ ແລະ ກາລະໂອກາດໃຫ້ການປະຕິວັດຢູ່ຫວຽດນາມ ໂດຍໄດ້ທຳລາຍຕ່ອງໂສ້ຄວາມເປັນຂ້າທາດຂອງຈັກກະພັກລ່າເມືອງຂຶ້ນແບບເກົ່ານັບເປັນເວລາຫຼາຍສິບປີນັ້ນລົງ ພ້ອມທັງປະກາດເອກະລາດ ແລະ ກ້າວສູ່ສັງກາດໃໝ່ ໂດຍມີ ປະທານ ໂຮ່ຈິມິນ ເປັນຜູ້ນຳ; 2) ຜົນງານ 80 ປີແຫ່ງການກໍ່ສ້າງ, ປົກປັກຮັກສາ ແລະ ພັດທະນາປະເທດຊາດຫວຽດນາມ ຊຶ່ງ ສະຫາຍ ໄດ້ເນັ້ນສີ່ເນື້ອໃນເຊັ່ນ: ໄຊຊະນະອັນໃຫຍ່ຫຼວງໃນການທ້ອນໂຮມປະເທດຊາດ, ການປະຕິບັດພັນທະສາກົນ, ການນຳພາປະເທດຊາດກ້າວສູ່ເສັ້ນທາງສັງຄົມນິຍົມ, ຜົນສຳເລັດການນຳພາປ່ຽນແປງໃໝ່ຢ່າງມີຫຼັກການຂອງພັກເປັນເວລາ 4 ທົດສະວັດຜ່ານມາ ໄດ້ພິສູດໃຫ້ເຫັນໝາກຜົນຮອບດ້ານໃນການພັດທະນາປະເທດ ເປັນຕົ້ນການສ້າງລັດແຫ່ງກົດໝາຍສັງຄົມນິຍົມ ແລະ 3) ໄດ້ຍົກໃຫ້ເຫັນມູນເຊື້ອ-ໝາກຜົນຂອງການພົວພັນຮ່ວມມືແບບພິເສດ ລາວ-ຫວຽດນາມ ຕະຫຼອດໄລຍະຜ່ານມາ ໂດຍແມ່ນບັນພະບູລຸດ ລາວ-ຫວຽດນາມ ເປັນຜູ້ກໍ່ຕັ້ງໄວ້ ຊຶ່ງສອງພັກ-ສອງລັດ, ສອງກອງທັບ ແລະ ປະຊາຊົນສອງຊາດເຄີຍຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ຮ່ວມຊຸມຄອງດຽວກັນ ຕີສັດຕູໂຕດຽວກັນ ແລະ ມີພັກກອມມູນິດອິນດູຈີນໃນການກໍ່ຕັ້ງພັກຕົນ ແລະ ນຳພາຍາດເອົາໄຊຊະນະເປັນກ້າວໆມາ.

ໃນພິທີດັ່ງກ່າວ, ຄະນະພົວພັນຕ່າງປະເທດສູນກາງພັກ ກໍ່ໄດ້ຈັດພິທີປະກາດການແຕ່ງຕັ້ງຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າກົມ ແລະ ຂັ້ນພະແນກຈຳນວນໜຶ່ງ, ພ້ອມນີ້ ສະຫາຍຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໂອ້ລົມໃຫ້ທິດຊີ້ນຳຕໍ່ພະນັກງານທີ່ໄດ້ຮັບການເລື່ອນຕຳແໜ່ງບໍລິຫານ ໃຫ້ເອົາໃຈໃສ່ເພີ່ມທະວີການນຳໃຊ້ຄວາມຮູ້ຄວາມສາມາດຂອງຕົນເຂົ້າໃນການເປັນກຳລັງແຮງໃຫ້ແກ່ ຄະນະພົວພັນຕ່າງປະເທດສູນກາງພັກ ໃນໄລຍະໃໝ່.

3) **ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບອຳລາຂອງບັນດາ ເອກອັກຄະລັດຖະທູດຕ່າງປະເທດ ປະຈຳ ສປປ ລາວ**

 

ໃນວັນທີ 15 ກັນຍາ 2025, ທີ່ ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ບຸນເຫຼືອ ພັນດານຸວົງ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການຢ້ຽມຂໍ່ານັບອຳລາຂອງ ທ່ານ ນາງ ມໍຣະກົດ ສີສະຫວັດ ເອກອັກຄະຣາຊະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ຣາຊະອານາຈັກໄທ ແລະ ທ່ານ ຊູເດັສ ມາເນຍ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດ ສິງກະໂປ ປະຈຳ ສປປ ລາວ ທີ່ ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ.

ໃນໂອກາດດັ່ງກ່າວ, ທ່ານ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ ທ່ານເອກອັກຄະລັດຖະທູດ ທັງ 2 ທີ່ໄດ້ສຳເລັດການປະຕິບັດໜ້າທີ່ວຽກງານການທູດ ຢູ່ ສປປ ລາວ ໃນໄລຍະຜ່ານມາ, ເຊິ່ງໄດ້ມີການເຄື່ອນໄຫວຢ່າງຫ້າວຫັນ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຊຸກຍູ້ ແລະ ສົ່ງເສີມການພົວພັນຮ່ວມມື ລະຫວ່າງ ສປປ ລາວ-ຣາຊະອານາຈັກໄທ ແລະ ສປປ ລາວ-ສາທາລະນະລັດສິງກະໂປ ໃຫ້ນັບມື້ນັບແໜ້ນແຟ້ນ ແລະ ມີການຂະຫຍາຍຍິ່ງໆຂຶ້ນ, ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ໄທ ກໍຄື ປະຊາຊົນສອງຊາດ ລາວ-ສິງກະໂປ. ພ້ອມນີ້ ທ່ານຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຍັງໄດ້ສະແດງຄວາມຂອບໃຈຕໍ່ ການຊ່ວຍເຫຼືອ ແລະ ສະໜັບສະໜູນ ຂອງ ລັດຖະບານ ແລະ ປະຊາຊົນໄທ ກໍຄື ລັດຖະບານ ແລະ ປະຊາຊົນສິງກະໂປ ທີ່ມີຕໍ່ ລັດຖະບານ ແລະ ປະຊາຊົນລາວ ບັນດາເຜົ່າ ໃນໄລຍະຜ່ານມາ ກໍ່ຄືປັດຈຸບັນ ອັນໄດ້ປະກອບສ່ວນສຳ

ຄັນເຂົ້າໃນການສ້າງສາພັດທະນາ ເສດຖະກິດ-ສັງຄົມ ສປປ ລາວ. ພ້ອມທັງໄດ້ອວຍພອນໃຫ້ ທ່ານທູດທັງສອງ ເດີນທາງກັບຄືນປະເທດດ້ວຍຄວາມສະຫວັດດີພາບທຸກປະການ ແລະ ສືບຕໍ່ການເປັນຂົວເຊື່ອມຕໍ່ມິດຕະພາບທີ່ດີງາມ ລະຫວ່າງ ສປປ ລາວ ກັບ ໄທ ແລະ ສິງກະໂປ, ປະກອບສ່ວນເຂົ້າໃນການເສີມສ້າງ ສັນຕິພາບ, ມິດຕະພາບ ແລະ ການຮ່ວມມືໃນພາກພື້ນ ແລະ ໃນໂລກ.

**4) ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ໄດ້ຈັດພິທີລະນຶກ ວັນສັນຕິພາບສາກົນ**



ວັນທີ 19 ກັນຍາ 205, ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ໄດ້ຈັດພິທີລະນຶກ ວັນສັນຕິພາບສາກົນ. ໃຫ້ກຽດເລົ່າມູນເຊື້ອໂດຍ ທ່ານ ສົມມາດ ພົລເສນາ, ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ,ປະທານຄະນະສັນຕິພາບ ແລະ ສາມັກຄີຂອງລາວ ແລະ ຍັງມີຄະນະບໍລິຫານງານ ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ເຂົ້າຮ່ວມ.

ທ່ານ ສົມມາດ ພົລເສນາ ໄດ້ໃຫ້ຮູ້ວ່າ ປັດຈຸບັນສະພາບການພາກພື້ນ ແລະ ສາກົນ ມີການຜັນແປໄປຢ່າງວ່ອງໄວ ແລະ ສະຫຼັບຊັບຊ້ອນ, ຫຼາຍພາກພື້ນຍັງເກີດມີສົງຄາມ ແລະ ການປະທະກັນດ້ວຍກຳລັງອາວຸດ. ສະນັ້ນ, ອົງການສະຫະປະຊາຊາດ ຈຶ່ງໄດ້ຮຽກຮ້ອງໃຫ້ບັນດາປະເທດສະມາຊິກ ແລະ ອົງການຈັດຕັ້ງສາກົນ ກໍຄືອົງການຈັດຕັ້ງສັນຕິພາບ ຂອງບັນດາປະເທດຕ່າງໆ ຈັດກິດຈະກຳ ເພື່ອລະນຶກວັນສັນຕິພາບສາກົນ 21 ກັນຍາ ເພື່ອປຸກລະດົມໃຫ້ປະຊາຊາດ ໄດ້ເຫັນໄດ້ເຖິງຄຸນຄ່າຂອງສັນຕິພາບ, ບໍ່ມີສັນຕິພາບກໍ່ບໍ່ມີເງື່ອນໄຂໃນການພັດທະນາ. ປີນີ້ເປັນປີໜຶ່ງທີ່ມີຄວາມໝາຍສຳຄັນຕໍ່ກັບສັນຕິພາບ ໃນໂອກາດ ຄົບຮອບ 80 ປີ ການສ້າງຕັ້ງອົງການສະຫະປະຊາຊາດ ແລະ ໄຊຊະນະຂອງປະຊາຊາດໃນສົງຄາມຕ້ານຟາຊິດໂລກ. ດັ່ງນັ້ນ, ປີນີ້ ອົງການສະຫະປະຊາຊາດ ຈຶ່ງມີຄຳຂວັນລະນຶກວັນສັນຕິພາບສາກົນວ່າ: ເລີ່ມຕົ້ນດຽວນີ້ ເພື່ອໂລກແຫ່ງສັນຕິພາບ Act Now for a Peaceful World.

ວັນສັນຕິພາບສາກົນ ໄດ້ຮັບການສ້າງຕັ້ງຂຶ້ນໂດຍສະມັດຊາໃຫຍ່ອົງການສະຫະປະຊາຊາດ (UNGA) ໃນປີ 1981 ເພື່ອເສີມຂະຫຍາຍສັນຕິພາບໃນທົ່ວໂລກ. ວັນສັນຕິພາບສາກົນ ຄັ້ງທຳອິດໄດ້ຖືກປະຕິບັດໃນວັນທີ 3 ກັນຍາ 1982 ແລະ ໄດ້ຈັດຂຶ້ນຕໍ່ເນື່ອງໃນເດືອນກັນຍາ ຂອງແຕ່ລະປີ. ຈົນມາຮອດວັນທີ 7 ກັນຍາ 2001, ສະມັດຊາໃຫຍ່ ອົງການສະຫະປະຊາຊາດ ມີຄຳເຫັນພ້ອມກັນໃນການຮັບຮອງເອົາມະຕິ ເລກທີ 55/282 ເພື່ອກຳນົດເອົາ ວັນທີ 21 ກັນຍາ ຂອງທຸກໆປີ ເປັນວັນສັນຕິພາບສາກົນ. ເນື້ອໃນມະຕິ ໄດ້ລະບຸວ່າ ວັນສັນຕິພາບສາກົນ ຕ້ອງເປັນວັນບໍ່ມີຄວາມຮຸນແຮງ ແລະ ຢຸດຍິງ, ຮຽກຮ້ອງໃຫ້ຢຸດຕິການປະທະກັນ. ການປະຕິບັດເອົາວັນດັ່ງກ່າວເປັນວັນສັນຕິພາບສາກົນ ໄດ້ເລີ່ມຕັ້ງແຕ່ກອງປະຊຸມສະມັດຊາໃຫຍ່ຄັ້ງ ທີ 57 ຂອງ ສະຫະປະຊາຊາດ ໃນປີ 2002 ແລະ ຮຽກຮ້ອງໃຫ້ມີການຢຸດຍິງທົ່ວໂລກ ແລະ ແມ່ນເວລາສຳລັບການບໍ່ສ້າງຄວາມຮຸນແຮງ. ຈຸດປະສົງຂອງການກຳນົດເອົາວັນດັ່ງກ່າວເພື່ອລະນຶກ ແມ່ນເພື່ອຮຽກຮ້ອງໃຫ້ມີການຢຸດຍິງທົ່ວໂລກເປັນເວລາ 24 ຊົ່ວໂມງ ແລະ ຢຸດຕິການໃຊ້ຄວາມຮຸນແຮງ, ສົ່ງເສີມການສົນທະນາເພື່ອແກ້ຂໍ້ຂັດແຍ່ງ ແລະ ການສຶກສາສັນຕິພາບ. ພ້ອມນັ້ນ, ເປັນການສົ່ງເສີມການພັດທະນາແບບຍືນຍົງ.

ສຳລັບ ການເຄື່ອນໄຫວ ຂອງ ຄະນະສັນຕິພາບ ແລະ ສາມັກຄີ ຂອງລາວ ໃນການສະໜັບສະໜູນວັນສັນຕິພາບສາກົນ 21 ກັນຍາ ຜ່ານມາ ໄດ້ຈັດກິດຈະກຳໂຄສະນາເຜີຍແຜ່ກ່ຽວກັບສັນຕິພາບ ແລະ ຜົນຮ້າຍຂອງສົງຄາມໂດຍການຈັດຍ່າງສັນຕິພາບ, ຈັດແຂ່ງຂັນປະກວດໃຫ້ເຍົາວະຊົນ-ຊາວໜຸ່ມ ແຕ້ມຮູບກ່ຽວກັບສັນຕິພາບ ແລະ ການພັດທະນາ, ເຜີຍແຜ່ວຽກງານສັນຕິພາບ ໃຫ້ປະຊາຊົນລາວບັນດາເຜົ່າໄດ້ຮັບຮູ້ ແລະ ເຂົ້າໃຈຄວາມສຳຄັນຂອງວຽກງານສັນຕິພາບ, ເຊິ່ງຍາມໃດກໍຕິດພັນກັບການພັດທະນາ. ພ້ອມນັ້ນກໍ່ຍົກໃຫ້ເຫັນເຖິງຜົນຮ້າຍ ຂອງ ສົງຄາມ ກໍຄືການແກ້ໄຂບັນຫາ

ດ້ວຍກຳລັງອາວຸດ, ເຊິ່ງໄດ້ທຳລາຍຊັບສິນ ແລະ ຊີວິດຂອງປະຊາຊາດໃນໂລກຢ່າງມະຫາສານ ດັ່ງທີ່ເຫັນໃນສົງຄາມໂລກ ຄັ້ງທີ II ຜ່ານມາ. ສຳລັບການເຄື່ອນໄຫວໃນເວທີສາກົນ ໄດ້ເຄື່ອນໄຫວເຂົ້າຮ່ວມກອງປະຊຸມລະນຶກວັນສັນຕິພາບສາກົນຢ່າງເປັນປົກກະຕິ ຕາມການເຊີນຂອງອົງການຈັດຕັ້ງພາກພື້ນ ແລະ ສາກົນ ແລະ ສະໜັບສະໜູນບັນດາຖະແຫຼງການ ຂອງສະພາສັນຕິພາບໂລກ ຕໍ່ເຫດການຮຸນແຮງ ແລະ ການປະທະກັນໃນພາກພື້ນ ແລະ ໃນໂລກ.

**5) ສະມາຄົມມິດຕະພາບລາວ - ສປປ ເກົາຫຼີ ຈັດພິທີປາຖະກະຖາເນື່ອງໃນໂອກາດວັນສະຖາປະນາ ສາທາລະນະລັດປະຊາຊົນ ປະຊາທິປະໄຕ ເກົາຫຼີ ຄົບຮອບ 77 ປີ (9/9/1948 - 9/9/2025)**



ໃນຕອນເຊົ້າວັນທີ 05 ກັນຍາ 2025 ທີ່ ແຂວງບໍລິຄຳໄຊ, ສະມາຄົມມິດຕະພາບລາວ-ສປປ ເກົາຫຼີ ແລະ ອົງການປົກຄອງແຂວງບໍລິຄຳໄຊ ຮ່ວມກັບ ສະຖານເອກອັກຄະລັດຖະທູດແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ໄດ້ຈັດພິທີປາຖະກະຖາເນື່ອງໃນໂອກາດວັນສະຖາປະນາ ສາທາລະນະລັດ ປະຊາຊົນ ປະຊາທິປະໄຕ ເກົາຫຼີ ຄົບຮອບ 77 ປີ.

ໃຫ້ກຽດເຂົ້າຮ່ວມໃນພິທີ ຄັ້ງນີ້ມີ: ສະຫາຍ ປອ. ສອນທະນູ ທຳມະວົງ, ກຳມະການສູນກາງພັກ,  ເລຂາພັກແຂວງ, ປະທານກຳມະການປົກຄອງແຂວງບໍລິຄຳໄຊ; ສະຫາຍ ນາງ ວິລະວອນ ພົນທະວົງ, ຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ຮອງປະທານສະມາຄົມປະທານສະມາຄົມມິດຕະພາບ ລາວ - ສປປ ເກົາຫຼີ; ສະຫາຍ ລີ ຢົງ ຊົນ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ; ພ້ອມດ້ວຍພະນັກງານຈາກພາກສ່ວນກ່ຽວຂ້ອງທັງ ສປປ ເກົາຫຼີ ແລະ ລາວ ເຂົ້າຮ່ວມ.

ໃນໂອກາດນີ້ ສະຫາຍ ລີ ຢົງ ຊົນ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ໄດ້ຂຶ້ນກ່າວປາຖະກະຖາ ເຊິ່ງເນື້ອໃນເວົ້າເຖິງຜົນງານຂອງພັກແຮງງານເກົາຫຼີ, ລັດຖະບານ ແລະ ປະຊາຊົນ ສປປ ເກົາຫຼີ ພາຍໃຕ້ການຊີ້ນຳໆພາຂອງ ສະຫາຍ ກິມ ອິນ ຊຸງ, ຜູ້ນຳທີ່ຍິ່ງໃຫຍ່, ປະທານປະເທດຕະຫຼອດການ ແຫ່ງ  ສປປ ເກົາຫຼີ ແລະ ຜູ້ນຳພາແສງສະຫວ່າງແນວຄິດຈູດເຊ໋ ໃນພາລະກິດປະຕິວັດຂອງພັກ, ກຳລັງປະກອບອາວຸດ ແລະ ປະຊາຊົນ ສປປ ເກົາຫຼີ ໃນຂະບວນວິວັດແຫ່ງການຕໍ່ສູ້ປົດປ່ອຍຊາດກໍ່ຄືປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ສປປ ເກົາຫຼີ  ແລະ ສະຫາຍ ກິມ ເຈີງ ອິນ, ຜູ້ນຳທີ່ຍິ່ງໃຫຍ່, ເລຂາທິການໃຫຍ່ພັກແຮງງານເກົາຫຼີຕະຫຼອດການ, ປະທານຄະນະກຳມະທິການປ້ອງກັນຊາດແຫ່ງ ສປປ ເກົາຫຼີ ຕະຫຼອດການ; ໃນປັດຈຸບັນພາຍໃຕ້ການນຳພາຂອງ ສະຫາຍ ກິມ ເຈີງ ອຸນ , ຜູ້ນຳທີ່ເຄົາລົບຮັກ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ, ປະທານກິດຈະການແຫ່ງລັດແຫ່ງ ສປປ ເກົາຫຼີ, ຜູ້ບັນຊາການສູງສຸດກຳລັງປະກອບອາວຸດແຫ່ງ ສປປ ເກົາຫຼີ ເຮັດໃຫ້ ສປປ ເກົາຫຼີ ນັບມື້ມີການພັດທະນາ, ການເມືອງມີສະຖຽນລະພາບໜັກແໜ້ນ, ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງ, ທັນສະໄໝ, ເສດຖະກິດມີການພັດທະນາ, ຊີວິດການເປັນຢູ່ຂອງປະຊາຊົນ ສປປ ເກົາຫຼີ ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ ແລະ ເຮັດໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ເຖິງສະພາບການຕົວຈິງ ໃນ ການພັດທະນາກໍ່ຄືຜົນສຳເລັດອັນໃຫຍ່ຫຼວງທີ່ປະຊາຊົນ ສປປ ເກົາຫຼີ ຍາດມາໄດ້. ພ້ອມດຽວກັນນີ້ ສະຫາຍ ເອກອັກຄະລັດຖະທູດ ໄດ້ຍົກໃຫ້ເຫັນເຖິງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ ແລະ ສປປ ເກົາຫຼີ ໃນໄລຍະຜ່ານມາເຖິງປັດຈຸບັນ.